**ເລຂາທິການໃຫຍ່, ປະທານປະເທດ ສົ່ງໂທລະເລກອວຍພອນປີໃໝ່ຈີນ ເຖິງການນຳຈີນ**

ເນື່ອງໃນໂອກາດບຸນປີໃໝ່ຂອງປະຊາຊາດຈີນ ປະຈຳປີ 2024 ນີ້, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ສົ່ງໂທລະເລກອວຍພອນເຖິງ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດ ແຫ່ງ ສປ ຈີນ, ເນື້ອໃນຂອງໂທລະເລກ ລະບຸວ່າ:

ສະຫາຍ ສີ ຈິ້ນຜິງ ທີ່ນັບຖື, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງຈິ່ງໃຈ ຕໍ່ ສະຫາຍ ແລະ ພັນລະຍາ ທີ່ໄດ້ສົ່ງບັດອວຍພອນປີໃໝ່ສາກົນ 2024 ທີ່ງົດງາມ ແລະ ເຕັມໄປດ້ວຍໄມຕີຈິດມິດຕະພາບອັນສະໜິດສະໜົມອົບອຸ່ນເຖິງຂ້າພະເຈົ້າ ແລະ ພັນລະຍາ ແລະ ໃນໂອກາດບຸນປີໃໝ່ຈີນ (ປີມະໂຣງ) ທີ່ຈະມາເຖິງນີ້, ຕາງໜ້າຄະນະບໍລິຫານງານສູນກາງ ພັກປະຊາຊົນ ປະຕິວັດລາວ ກໍ່ຄື ໃນນາມສ່ວນຕົວ ແລະ ພັນລະຍາ, ຂ້າພະເຈົ້າ ຂໍສົ່ງຄຳອວຍພອນໄຊອັນປະເສີດມາຍັງ ສະຫາຍ ພ້ອມດ້ວຍຄອບຄົວ ແລະ ໂດຍຜ່ານ ສະຫາຍ ໄປຍັງ ຄະນະກຳມະການສູນກາງພັກກອມມູນິດຈີນ, ສະມາຊິກພັກ ແລະ ປະຊາຊົນຈີນ ອ້າຍນ້ອງທຸກຖ້ວນໜ້າ ມານະໂອກາດນີ້ດ້ວຍ.

ຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງທີ່ເຫັນວ່າ ສາຍພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ສືບຕໍ່ໄດ້ຮັບການເສີມຂະຫຍາຍ ດ້ວຍທ່ວງທ່າທີ່ໜັກແໜ້ນກວ່າເກົ່າ, ໂດຍສະເພາະແມ່ນການລົງນາມແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ຈີນ-ລາວ ສະບັບໃໝ່ ແລະ ຜົນການພົບປະກັບສະຫາຍ ໃນໂອກາດເຂົ້າຮ່ວມກອງປະຊຸມ “ໜຶ່ງແລວ ໜຶ່ງເສັ້ນທາງ” ຄັ້ງທີ 3 ແລະ ຢ້ຽມຢາມເຮັດວຽກຢູ່ ສປ ຈີນ ໃນທ້າຍປີ 2023 ຜ່ານມາ, ເຊິ່ງເປັນບາດກ້າວ ທີ່ມີຄວາມໝາຍສຳຄັນປະຫວັດສາດ ຂອງ ການພົວພັນຮ່ວມມື ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ໃນໄລຍະໃໝ່; ຂ້າພະເຈົ້າ ຍິນດີຮ່ວມກັບສະຫາຍ ສືບຕໍ່ຊີ້ນຳໃນການເພີ່ມທະວີ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ຈີນ-ລາວ ໃຫ້ມີມາດຕະຖານສູງ, ຄຸນນະພາບສູງ ແລະ ລະດັບທີ່ສູງກວ່າເກົ່າເພື່ອສືບຕໍ່ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ຈີນ.

ເນື່ອງໃນໂອກາດອັນເບີກບານມ່ວນຊື່ນຕ້ອນຮັບປີໃໝ່ປະເພນີປະຊາຊົນຈີນນີ້, ຂ້າພະເຈົ້າພ້ອມດ້ວຍພັນລະຍາ ຂໍອວຍພອນໄຊອັນປະເສີດມາຍັງ ສະຫາຍ ພ້ອມດ້ວຍພັນລະຍາ ແລະ ຄອບຄົວ ຈົ່ງມີພະລານາໄມສົມບູນ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນໜ້າທີ່ອັນມີກຽດສູງສົ່ງຂອງສະຫາຍ ແລະ ອວຍພອນໃຫ້ ປະຊາຊົນຈີນ ອ້າຍນ້ອງ ຈົ່ງສືບຕໍ່ມີຄວາມສົມບູນພູນສຸກ ແລະ ວັດທະນະຖາວອນ; ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ຈີນ-ລາວ ຈົ່ງແຕກດອກອອກຜົນຍິ່ງໆຂຶ້ນ.

ໃນໂອກາດດຽວກັນ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ກໍ່ໄດ້ສົ່ງໂທລະເລກອວຍພອນເຖິງ ສະຫາຍ ຫຼິວ ຈ້ຽນຊາວ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ.